ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ກົມນະໂຍບາຍເງິນຕາ

ເລກທີ 168 /ກນງ
ນະຄອນຫຼວງວຽງຈັນ, ວັນທີ 13 ກຸມພາ 2018

# ແຈ້ງການ

**ເຖິງ:** ບັນດາທະນາຄານທຸລະກິດລັດ, ຮ່ວມທຶນ, ເອກະຊົນ, ໃນເຄືອ ແລະ ສາຂາຕ່າງປະເທດ

**ເລື່ອງ:** ການກໍານົດອັດຕາດອກເບ້ຍເງິນຝາກສະກຸນເງິນກີບຂອງທະນາຄານທຸລະກິດ

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1999;
- ອີງຕາມຂໍ້ຕົກລົງກ່ຽວກັບການກໍານົດອັດຕາດອກເບ້ຍພື້ນຖານຂອງທະນາຄານແຫ່ງ ສປປ ລາວ ສະບັບເລກທີ 1230/ທຫລ, ລົງວັນທີ 08 ທັນວາ 2017.

**ກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ ອອກແຈ້ງການ:**

1. ອັດຕາເງິນເຟີ້ທີ່ບໍ່ລວມການເໜັງຕີງຂອງລາຄານໍ້າມັນ ສະເລ່ຍປີ 2017 ເທົ່າກັບ 3,59%.
2. ໃຫ້ທະນາຄານທຸລະກິດກໍານົດອັດຕາດອກເບ້ຍເງິນຝາກສະກຸນເງິນກີບ ແຕ່ລະປະເພດ ດັ່ງນີ້:
   - ອັດຕາດອກເບ້ຍເງິນຝາກກະແສລາຍວັນ ແລະ ເງິນຝາກປະຢັດ ບໍ່ເກີນ 1,89%;
   - ອັດຕາດອກເບ້ຍເງິນຝາກມີກໍານົດ 3 ເດືອນ ບໍ່ເກີນ 3,16%;
   - ອັດຕາດອກເບ້ຍເງິນຝາກມີກໍານົດ 6 ເດືອນ ບໍ່ເກີນ 3,95%;
   - ອັດຕາດອກເບ້ຍເງິນຝາກມີກໍານົດ 12 ເດືອນ ບໍ່ເກີນ 5,59%;
   - ອັດຕາດອກເບ້ຍເງິນຝາກມີກໍານົດ 24 ເດືອນ ບໍ່ເກີນ 6,71%;
   - ອັດຕາດອກເບ້ຍເງິນຝາກມີກໍານົດ 36 ເດືອນ ບໍ່ເກີນ 6,77%;
   - ອັດຕາດອກເບ້ຍເງິນຝາກມີກໍານົດ 48 ເດືອນ ບໍ່ເກີນ 6,83%;
   - ອັດຕາດອກເບ້ຍເງິນຝາກມີກໍານົດ 60 ເດືອນ ບໍ່ເກີນ 6,90%.
3. ໃນກໍລະນີ ທະນາຄານທຸລະກິດມີຜະລິດຕະພັນເງິນຝາກ ທີ່ບໍ່ໄດ້ກໍານົດໄວ້ໃນຂໍ້ທີ 2. ຂອງແຈ້ງການສະບັບນີ້ ທະນາຄານທຸລະກິດ ຕ້ອງເຮັດໜັງສືແຈ້ງມາຍັງ ກົມນະໂຍບາຍເງິນຕາ ເພື່ອທົບທວນ ແລະ ກວດຄືນຄວາມຖືກຕ້ອງ ໃນການກໍານົດລະດັບອັດຕາດອກເບ້ຍເສຍກ່ອນຈິ່ງສາມາດນໍາໃຊ້ຜະລິດຕະພັນດັ່ງກ່າວໄດ້.
4. ໃຫ້ທະນາຄານທຸລະກິດລາຍງານສະພາບການຈັດຕັ້ງປະຕິບັດອັດຕາດອກເບ້ຍເງິນຝາກ, ເງິນກູ້ ແຍກສະກຸນເງິນ, ແຍກໄລຍະເວລາ, ແຍກຂະແໜງການ ໃຫ້ກົມນະໂຍບາຍເງິນຕາ ທະນາຄານແຫ່ງ ສປປ ລາວ ເປັນລາຍເດືອນ ພາຍ ໃນ 7 ວັນ ລັດຖະການຂອງເດືອນຖັດໄປ.
5. ແຈ້ງການສະບັບນີ້ມີຜົນສັກສິດນັບແຕ່ 01 ມີນາ 2018 ເປັນຕົ້ນໄປ.

**ຫົວໜ້າກົມນະໂຍບາຍເງິນຕາ**

ຄໍາພຸດ ສິດທິລາດ

ທະນາຄານແຫ່ງ ສປປ ລາວ, ຖະໜົນ ຢອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 BNL.VTE.LS
ໂທລະສານ: (856)-21-213108 ໂທລະສັບ: 213109-213110 Email: BOL@bol.gov.la; www.bol.gov.la